ປູກສາລີເປັນສິນຄ້າ ແກ້ໄຂຄວາມທຸກຍາກ
ການປູກສາລີ ຖືເປັນອີກຫນຶ່ງຫົນທາງໃນການສ້າງເສດຖະກິດຄອບຄົວແກ້ໄຂ
ຄວາມທຸກຍາກ, ເຊິ່ງໃນວັນນີ້
ພວກເຮົາຈະພາມາຮູ້ຈັກຄອບຄົວຕົວແບບດ້ານການປູກສາລີເປັນສິນຄ້າ
ແກ້ໄຂຄວາມທຸກຍາກຢູ່ບ້ານໄຊຊະນະ ເມືອງປາກແບງ ແຂວງອຸດົມໄຊ.

ທ. ຄຳສຸກ ແກ້ວໂພໄຊ ຄອບຄົວຕົວແບບປູກສາລີເປັນສິນຄ້າໃຫ້ຮູ້ວ່າ: ໃນປີ
2009 ທະນາຄານນະໂຍບາຍຫນ່ວຍບໍລິການເມືອງປາກແບງ
ໄດ້ປ່ອຍສິນເຊື່ອໃຫ້ຄອບຄົວຂ້າພະເຈົ້າຈຳນວນ 5 ລ້ານກີບ
ເປັນທຶນຊື້ແນວພັນສາລີ, ຢາຂ້າສັດຕູພືດ ແລະ ຊື້ອຸປະກອນລົດໄຖ.
ເນື້ອທີ່ສວນສາລີຂອງ ທ ຄຳສຸກ ມີທັງຫມົດ 2,5 ເຮັກຕາ ໄດ້ຜົນຜະລິດສະເລ່ຍ 7
ໂຕນຕໍ່ເຮັກຕາ (ຜະລິດສອງລະດູຕໍ່ປີ), ລາຄາຂາຍສາລີສະເລ່ຍ 1.650
ກີບຕໍ່ກິໂລ.ປີດຽວກັນ ທ. ຄຳສຸກ ສ້າງລາຍຮັບຈາກການຂາຍສາລີທັງຫມົດ 28,8
ລ້ານກວ່າກີບ, ປີ 2010 ຂາຍສາລີໄດ້ທັງຫມົດ 33,3 ລ້ານກວ່າກີບ; ສະເພາະປີ 2011
ນີ້ ຄາດວ່າຈະສ້າງລາຍຮັບເຂົ້າຄອບຄົວຕື່ມປະມານ 40 ລ້ານກີບ. ທ. ຄຳສຸກ
ໄດ້ນຳເອົາລາຍ ຮັບຈາກການຂາຍສາລີໃນແຕ່ລະປີຊຳລະຫນີ້ຕົ້ນທຶນ ແລະ
ດອກເບ້ຍເງິນກູ້ໃຫ້ທະນາຄານນະໂຍບາຍຫນ່ວຍບໍລິການ ເມືອງປາກແບງ
ທັນຕາມກຳນົດ ສັນຍາ. ສ່ວນທີ່ເຫລືອເປັນທຶນ ຮອນຊື້ລົດໄຖນາເດີມຕາມ 1
ຄັນ,ລົດຈັກ 1 ຄັນ, ຊື້ສັດລ້ຽງ (ຄວາຍ 1 ໂຕ, ຫມູລ້ຽງ 5 ໂຕ),
ຊື້ເຄື່ອງໃຊ້ສອຍຄົວເຮືອນເປັນຕົ້ນຕູ້ເຢັນ ແລະ ເອົາໄຟຟ້າເຂົ້າເຮືອນ.
ນອກນີ້ ຍັງເປັນທຶນສົ່ງເສີມການສຶກສາໃຫ້ລູກຊາຍໄດ້ຮຽນຈົບມະຫາວິທະ-ຍາໄລແຫ່ງຊາດ.

ປະຈຸບັນ ວິຖີດຳລົງຊີວິດຂອງຄອບຄົວ ທ.ຄຳສຸກ ປ່ຽນແປງດີຂຶ້ນ. ດ້ານ ທ່ານ ສຶກ
ພູມິສຸກ ນາຍ ບ້ານໆໄຊຊະນະລາຍງານວ່າ: ຮອດປີ 2011 ປະຊາຊົນ 198
ຄອບຄົວໃນຈຳນວນ 238 ຄອບຄົວໄດ້ກູ້ຢືມເງິນນຳ ທນບ
ຫນ່ວຍບໍລິການເມືອງປາກແບງສຸມໃສ່ການປູກສາລີເປັນສິນຄ້າເປັນຕົ້ນ ຕໍ
ເຊິ່ງສອດຄ່ອງກັບການແຈ້ງໃຫ້ຮູ້ຂອງ ທ່ານ ເກດສະ ຫນາ ແສນສຸລິນທາ
ຮອງຫົວຫນ້າຫນ່ວຍບໍລິການເມືອງປາກແບງວ່າ: ສົກປີ 2011
ໄດ້ຮັບແຫລ່ງທຶນສິນເຊື່ອ 5,44 ຕື້ກີບ, ພຽງ 6 ເດືອນຕົ້ນປີນີ້
ໄດ້ປ່ອຍສິນເຊື່ອຕົວຈິງແລ້ວ 5,44 ຕື້ກີບປະຕິບັດແຜນການປີ 100%. ໃນນັ້ນ
ສິນເຊື່ອໄລຍະສັ້ນ 3,56 ຕື້ກີບ, ໄລຍະກາງ 79 ລ້ານກີບ ແລະ ໄລຍະຍາວ 1,8 ຕື້ກີບ
ໃນເປົ້າຫມາຍປູກຝັງ, ລ້ຽງສັດ, ຊື້ອຸປະກອນການຜະ ລິດ ແລະ
ເກັບຊື້ຜົນຜະລິດຂອງ ຊາວກະສິກອນ. ສິນເຊື່ອດັ່ງກ່າວ ໄດ້ປ່ອຍກູ້ ໃນ 25
ບ້ານ, ມີ 139 ກຸ່ມຜະລິດ, ກວມ 981 ຄອບຄົວ. ຮອດເດືອນ 6 ປີນີ້
ຫນ່ວຍບໍລິການມີຍອດສິນເຊື່ອ 13,01 ຕື້ກີບ.
 1 / 2

ປູກສາລີເປັນສິນຄ້າ ແກ້ໄຂຄວາມທຸກຍາກ

ແຫຼ່ງທີ່ມາຂອງຂ່າວ:
 2 / 2